# ພິທີລົງນາມການຮ່ວມມືລະຫວ່າງ

## ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດ ໃສທິລາດ ກຣຸບ ຈຳກັດ ວ່າດ້ວຍການບໍລິການອອກບັດສິນເຊື່ອເບີກເກີນບັນຊີ (OD) ໃຫ້ແກ່ລູກຄ້າຂອງບໍລິສັດ ໃສທິລາດ ກຣຸບ ຈຳກັດ

**ທີ່ ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ, ວັນທີ: 24/12/2018**

ວັນທີ 24 ທັນວາ 2018, ຢູ່ທີ່ ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ ໄດ້ຈັດພິທີລົງນາມການຮ່ວມມືລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ບໍລິສັດ ໃສທິລາດ ກຣຸບ ຈຳກັດ ວ່າດ້ວຍການບໍລິການອອກບັດສິນເຊື່ອເບີກເກີນບັນຊີ (OD) ໃຫ້ແກ່ລູກຄ້າຂອງບໍລິສັດ ໃສທິລາດ ກຣຸບ ຈຳກັດ. ໃຫ້ກຽດລົງນາມໃນຄັ້ງນີ້ ໂດຍ ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ ແລະ ທ່ານ ສຸກສາຄອນ ໃສທິລາດ ຜູ້ອຳນວຍການ ບໍລິສັດ ໃສທິລາດ ກຣຸບ ຈຳກັດ. ໃຫ້ກຽດເຂົ້າຮ່ວມເປັນສັກຂີພິຍານໂດຍ ຄະນະອຳນວຍການ ແລະ ຜູ້ບໍລິຫານຂອງທັງສອງຝ່າຍ, ຄະນະພະແນກ, ສູນ ແລະ ສາຂາ ພາຍໃນນະຄອນຫຼວງວຽງຈັນ ຂອງ ທຄຕລ, ຕະຫຼອດຮອດພະນັກງານຂອງທັງສອງຝ່າຍ ແລະ ສື່ມວນຊົນຈາກຫຼາຍພາກສ່ວນກໍໄດ້ເຂົ້າຮ່ວມຢ່າງພ້ອມພຽງ.




ການບໍລິການອອກບັດສິນເຊື່ອເບີກເກີນບັນຊີ ຫຼື ບັດ OD ເປັນຜະລິດຕະພັນໜຶ່ງຂອງ ທຄຕລ ທີ່ພັດທະນາຂຶ້ນມາເພື່ອແນ່ໃສ່ໃຫ້ບັນດາຜູ້ປະກອບການທຸລະກິດສາມາດເຂົ້າເຖິງແຫຼ່ງທຶນໄດ້, ເປັນການທັນສູ່ຄວາມທັນສະໄໝເທື່ອລະກ້າວ ທັງເປັນການຜັນຂະຫຍາຍເຄືອຄ່າຍບໍລິການໃຫ້ກວ້າງຂວາງ ແລະ ເພີ່ມຂີດຄວາມສາມາດໃນການແຂ່ງຂັນທາງທຸລະກິດ. ທຄຕລ ໄດ້ເລີ່ມໃຫ້ບໍລິການອອກບັດສິນ

ເຊື່ອເບີກເກີນບັນຊີ ຫຼື ບັດ OD ຄັ້ງທຳອິດໃນປີ 2014. ໂດຍອອກໃຫ້ກັບບັນດາບໍລິສັດ ທີ່ມີຕົວແທນຈຳໜ່າຍສິນຄ້າທີ່ຊື້ຈາກບໍລິສັດນັ້ນ. ໂດຍການນຳໃຊ້ບັດ OD ໃນການຊຳລະສະສາງຄ່າສິນຄ້າ ແລະ ບໍລິການ. ສ້າງຄວາມສະດວກໃນການຊຳລະສະສາງຜ່ານລະບົບທະນາຄານ ແລະ ເປັນການຫຼຸດຜ່ອນການນຳໃຊ້ເງິນສົດອີກດ້ວຍ. ທຄຕລ ໄດ້ສືບຕໍ່ພັດທະນາຢ່າງຕໍ່ເນື່ອງ ໂດຍເອົາໃຈໃສ່ໃນການນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນວຽກງານບໍລິການໃຫ້ມີຄວາມທັນສະໄໝ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຊຳລະສະສາງ ແລະ ການເຮັດທຸລະກຳທາງດ້ານການເງິນຕ່າງໆ ໂດຍລູກຄ້າເອງບໍ່ຈຳເປັນຕ້ອງເຂົ້າມາທະນາຄານ.




ການຮ່ວມມືກັນຂອງທັງສອງຝ່າຍວ່າດ້ວຍການບໍລິການອອກບັດສິນເຊື່ອເບີກເກີນບັນຊີ (OD) ໃຫ້ແກ່ລູກຄ້າຂອງ ບໍລິສັດ ໃສທິລາດ ກຣຸບ ຈຳກັດ ໃນຄັ້ງນີ້ ແມ່ນເພື່ອເປັນການຂະຫຍາຍສິນເຊື່ອຂອງ ທຄຕລ ແລະ ເພື່ອເພີ່ມຍອດຂາຍສິນຄ້າຂອງ ບໍລິສັດ ໃສທິລາດ ກຣຸບ ຈຳກັດ ທັງສ້າງຄວາມສະດວກສະບາຍ ແລະ ສະພາບຄ່ອງໃຫ້ກັບລູກຄ້າກໍ່ຄືຫົວໜ່ວຍທຸລະກິດ ໂດຍລູກຄ້າຂອງ ບໍລິສັດ ໃສທິລາດ ກຣຸບ ຈຳກັດ ສາມາດນຳໃຊ້ວົງເງິນເບີກເກີນບັນຊີ (OD) ຕາມການອະນຸມັດສິນເຊື່ອຂອງ ທຄຕລ ແລະ ນຳໃຊ້ໃນການຊຳລະຄ່າວັດສະດຸກໍ່ສ້າງທີ່ຊື້ຈາກ ບໍລິສັດ ໃສທິລາດ ກຣຸບ ຈຳກັດ ຜ່ານເຄື່ອງຮູດບັດ EDC ຂອງ ທຄຕລ.

ນະໂອກາດນີ້ຂໍສະແດງຄວາມຂອບໃຈມາຍັງລູກຄ້າທຸກທ່ານທີ່ນຳໃຊ້ຜະລິດຕະພັນ ແລະ ບໍລິການ ຂອງ ທຄຕລ ຕະຫຼອດມາ. ທຄຕລ ຈະສືບຕໍ່ພັດທະນາລະບົບການບໍລິການໃຫ້ມີຄວາມທັນສະໄໝ ແລະ ສືບຕໍ່ໃຫ້ການຮ່ວມມືກັບພາກສ່ວນອື່ນໆເພື່ອອຳນວຍຄວາມສະດວກໃນການຊຳລະສະສາງຕ່າງໆຂອງລູກຄ້າ ໃນຍຸກແຫ່ງການບໍລິການທະນາຄານແບບດີຈີຕໍ.


ສັນຍາການຮ່ວມມືລະຫວ່າງ
ມະຫາຊົນ
ກຣຸບ ຈຳກັດ
SAYTHIRATH
GROUP






ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທັນສະໄໝ ວ່ອງໄວ ໝັ້ນໃຈ

Call center: 1555, Facebook: BCEL Bank, Website: www.bcel.com.la